


# ຜົນປະໂຫຍດການຊ່ວຍເຫຼືອສຳລັບການດັດປັບທາງການຄ້າ

ໂຄງການຊ່ວຍເຫຼືອສຳລັບການດັດປັບທາງການຄ້າ (Trade Adjustment Assistance, TAA) ໃຫ້ຜົນປະໂຫຍດ ແລະ ການສະໜັບສະໜູນແກ່ຄົນງານຜູ້ທີ່ຫວ່າງງານ ຫຼື ຜູ້ທີ່ມີຄວາມສ່ຽງຈະສູນເສຍວຽກເຮັດ, ຍ້ອນຜົນກະທົບຈາກການຄ້າລະຫວ່າງປະເທດ. ໂຄງການນີ້ໃຫ້ຄົນງານທີ່ຖືກຜົນກະທົບທາງລົບມີໂອກາດໄດ້ຮັບທັກສະ, ໃບປະກາດຮັບຮອງ, ຊັບພະຍາກອນ ແລະ ການສະໜັບສະໜູນທີ່ຈຳເປັນເພື່ອໄດ້ຮັບການຈ້າງງານຄືນໃໝ່.

## TAA ສາມາດໃຫ້ປະໂຫຍດແກ່ທ່ານແນວໃດ?

ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງສຳລັບການຝຶກອົບຮົມຢູ່ກັບວຽກເພື່ອມີທັກສະທີ່ຕ້ອງການ. ລວມມີການສຶກສາຊັ້ນສູງກວ່າ ເຊັ່ນ: ຫຼັກສູດປະລິນຍາ ແລະ ໃບປະກາດ ຫຼື ການສຶກສາຊົດເຊີຍ ເຊັ່ນ: ຫຼັກສູດພາສາອັງກິດເປັນພາສາທີສອງ (ESL). TAA ຍັງໃຫ້ເງິນອຸດໜູນລາຍຮັບແກ່ຜູ້ເຂົ້າຮ່ວມທີ່ມີສິດ, ເງິນອຸດໜູນສຳລັບການຊອກຫາວຽກ ແລະ ການຍ້າຍວຽກ ແລະ ເງິນເສີມຄ່າຈ້າງຖ້າທ່ານມີອາຍຸ 50 ປີຂຶ້ນໄປ.

## ທາງເລືອກການຝຶກອົບຮົມ

ມີການຝຶກອົບຮົມຫຼາກຫຼາຍປະເພດສຳລັບທັກສະທີ່ຕ້ອງການ ເຊັ່ນ:

- ການຝຶກອົບຮົມທາງອອນລາຍ / ໃນຫ້ອງຮຽນ (ເຕັມເວລາ ຫຼື ບໍ່ເຕັມເວລາ)
- ການຝຶກອົບຮົມຢູ່ກັບໜ້າວຽກ / ການຝຶກງານ
- ການຝຶກອົບຮົມສະເພາະຄວາມຕ້ອງການທີ່ຖືກອອກແບບມາເພື່ອຕອບສະໜອງຄວາມຕ້ອງການຂອງທຸລະກິດ ຫຼື ກຸ່ມທຸລະກິດສະເພາະ

ເມື່ອມີການກຳນົດການມີສິດເຂົ້າຮ່ວມໂຄງການ TAA ຂອງທ່ານແລ້ວ, ຫຼັກສູດຝຶກອົບຮົມຂອງທ່ານຕ້ອງໄດ້ຮັບອະນຸມັດ. ມີຫົກເກນເງື່ອນໄຂທີ່ຫຼັກສູດຝຶກອົບຮົມຂອງທ່ານຕ້ອງຕອບສະໜອງໄດ້. ຜູ້ຊ່ຽວຊານ TAA ຂອງທ່ານຈະເຮັດວຽກກັບທ່ານເພື່ອຕອບສະໜອງກຳນົດເວລາສຳຄັນຕ່າງໆ ແລະ ສ້າງແຜນການຈ້າງງານສະເພາະບຸກຄົນ (IEP) ເພື່ອຊ່ວຍທ່ານປະສົບຜົນສຳເລັດ.

## ເງິນອຸດໜູນສຳລັບການດັດປັບຄືນໃໝ່ທາງການຄ້າ (TRA)

ໃນຂະນະທີ່ທ່ານຢູ່ໃນການຝຶກອົບຮົມເຕັມເວລາ, ທ່ານອາດຈະໄດ້ຮັບເງິນ TRA (ຄ້າຍຄືກັບເງິນປະກັນການຫວ່າງງານ) ສູງເຖິງ 130 ອາທິດທີ່ເຂົ້າຝຶກອົບຮົມ.* ເພື່ອໃຫ້ມີສິດໄດ້ຮັບ TRA, ທ່ານຕ້ອງ:

- ໄດ້ຮັບການອະນຸມັດຫຼັກສູດຝຶກອົບຮົມຈາກຫ້ອງການສ່ວນກາງ TAA ຂອງລັດ New York (NYS)
- 'ລົງທະບຽນ' ເຂົ້າຮ່ວມຫຼັກສູດຝຶກອົບຮົມພາຍໃນ 26 ອາທິດຫຼັງຈາກຖືກປົດອອກຈາກງານ ຫຼື ຫຼັງຈາກທີ່ບໍລິສັດຂອງທ່ານໄດ້ຮັບການຢັ້ງຢືນສຳລັບຜົນປະໂຫຍດ TAA ໂດຍກະຊວງແຮງງານສະຫະລັດ, ເອົາອັນທີ່ຊ້າກວ່າ; (ສຳລັບຈຸດປະສົງ TAA, ຖືວ່າທ່ານໄດ້ 'ລົງທະບຽນ' ແລ້ວເມື່ອທ່ານມີຈົດໝາຍແຈ້ງການຮັບເອົາຈາກຜູ້ໃຫ້ການຝຶກອົບຮົມ, ຫຼັກສູດຝຶກອົບຮົມຂອງທ່ານໄດ້ຮັບອະນຸມັດຈາກຫ້ອງການສູນກາງຂອງ NYS TAA ແລະ ການເລີ່ມຫຼັກສູດແມ່ນພາຍໃນ 30 ວັນ)

*ອາທິດຮຽນແມ່ນອາທິດຕາມເວລາປະຕິທິນເຊິ່ງທ່ານໄດ້ເຂົ້າຮ່ວມການຝຶກອົບຮົມເປັນເວລາໜຶ່ງ ຫຼື ຫຼາຍມື້. ອີງຕາມກົດລະບຽບລັດຖະບານກາງຂອງ TAA, ການຝຶກອົບຮົມຂອງທ່ານບໍ່ສາມາດເກີນ 130 ອາທິດຮຽນ.

## ເງິນອຸດໜູນການຊອກວຽກເຮັດ

ລາຍຈ່າຍທີ່ມີສິດຈາກການຊອກວຽກເຮັດທີ່ຢູ່ນອກພື້ນທີ່ອາດຈະໄດ້ຮັບການຈ່າຍໃຫ້ໂດຍ TAA. ເງິນອຸດໜູນການຊອກວຽກເຮັດອາດຈະຈ່າຍທົດແທນ 90% ຂອງຄ່າໃຊ້ຈ່າຍທີ່ອະນຸຍາດໄດ້ ເຊັ່ນ: ຄ່າເດີນທາງ, ຄ່າອາຫານ ແລະ ຄ່າທີ່ພັກ, ສູງສຸດບໍ່ເກີນ $1,250.

## ເງິນອຸດໜູນການຍ້າຍວຽກເຮັດ

ບາງຄ່າໃຊ້ຈ່າຍຂອງການຍ້າຍໄປເຂດພື້ນທີ່ໃໝ່ສຳລັບວຽກໃໝ່ອາດຈະໄດ້ຮັບການຈ່າຍໃຫ້ໂດຍ TAA. ນີ້ອາດຈະລວມມີ 90% ຂອງລາຍຈ່າຍທີ່ອະນຸຍາດໄດ້ທີ່ກ່ຽວຂ້ອງກັບການຍົກຍ້າຍຕົວທ່ານ, ຄອບຄົວຂອງທ່ານ ແລະ ເຄື່ອງໃຊ້ໃນຄົວເຮືອນຂອງທ່ານ. ຖ້າພົບການຈ້າງງານທີ່ເໝາະສົມຢູ່ນອກເຂດພື້ນທີ່ໄປມາປົກກະຕິຂອງທ່ານ, ທ່ານອາດຈະໄດ້ຮັບເງິນເປັນກ້ອນເພີ່ມເຕີມສູງສຸດບໍ່ເກີນ $1,250.

## ເງິນຊ່ວຍເຫຼືອການດັດປັບການຄ້າສຳລັບການຈ້າງງານຄືນໃໝ່ (RTAA)

ຖ້າທ່ານອາຍຸ 50 ປີຂຶ້ນໄປ ແລະ ໄດ້ຮັບການຈ້າງງານຄືນໃໝ່ໃນອັດຕາຄ່າຈ້າງ $50,000 ລົງມາຕໍ່ປີ, ທ່ານອາດຈະມີສິດໄດ້ຮັບເງິນເສີມຄ່າຈ້າງ. ເງິນຊ່ວຍເຫຼືອ RTAA ຊ່ວຍເສີມສ່ວນຕ່າງເງິນຄ່າຈ້າງລະຫວ່າງຄ່າຈ້າງໃໝ່ຂອງທ່ານກັບຄ່າຈ້າງໃນເມື່ອກ່ອນຂອງທ່ານ.

## ເງິນລົດຢ່ອນພາສີສຳລັບຄວາມຄຸ້ມຄອງປະກັນສຸຂະພາບ (HCTC)

HCTC ແມ່ນເງິນລົດຢ່ອນພາສີລັດຖະບານກາງທີ່ຈ່າຍ 72.5% ຂອງເບ້ຍປະກັນສຸຂະພາບສຳລັບຄົນງານທີ່ມີສິດໄດ້ຮັບ ແລະ ຄອບຄົວຂອງເຂົາເຈົ້າ. ມັນບໍ່ໃຫ້ຄວາມຄຸ້ມຄອງປະກັນສຸຂະພາບ. IRS ເປັນໜ່ວຍງານຄຸ້ມຄອງບໍລິຫານໂຄງການ HCTC ແລະ ເປັນຜູ້ຕັດສິນກຳນົດການມີສິດໄດ້ຮັບໃນແຕ່ລະເດືອນ. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເຂົ້າເບິ່ງ **www.irs.gov/HCTC**.


ພະແນກແຮງງານລັດ New York ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ອຸປະກອນຊ່ວຍ ແລະ ການບໍລິການຊ່ວຍເຫຼືອແມ່ນມີໃຫ້ແກ່ບຸກຄົນທີ່ມີຄວາມພິການຕາມຄຳຂໍ.